ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

------===000===------

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
628 ບ້ານ: ໂພນເຜະເນົາ ກມ5
ຖະໜົນ: ໄກສອນພົມວິຫານ ເມືອງ: ໄຊເສດຖາ
ນະຄອນຫຼວງວຽງຈັນ ໂທ-ແຟັກ:(+856 21)418062 – 6

ເລກທີ: 0050/23-ມຫທຊ
ນະຄອນຫຼວງວຽງຈັນ, ວັນທີ: 21 ກຸມພາ 2023

ເຖິງ: ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ທ່ານຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ
ບັນດາຜູ້ຖືຮຸ້ນຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ເລື່ອງ: ແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 2/2023, ທີ່ຈັດຂຶ້ນໃນວັນທີ 21 ກຸມພາ 2023

- ອີງຕາມ ລະບຽບວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນ ສະບັບເລກທີ 04/ສຄຄຊ, ລົງວັນທີ 28 ມັງກອນ 2019.
- ອີງຕາມ ລະບຽບຂອງຕະຫຼາດຫຼັກຊັບລາວວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/ຕລຊລ, ລົງວັນທີ 27 ກັນຍາ 2018

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ມຫທຊ) ຂໍຖືເປັນກຽດແຈ້ງມະຕິສຳຄັນຂອງກອງປະຊຸມສະພາ ບໍລິຫານ ຄັ້ງທີ 2/2023 ທີ່ຈັດຂຶ້ນໃນວັນທີ 21 ກຸມພາ 2023 ເຊິ່ງມີວາລະຮັບຮອງເອົາມະຕິທີ່ສຳຄັນດັ່ງນີ້:

1. ຮັບຮອງຜົນການດຳເນີນການ ແລະ ລາຍງານປະຈຳປີ 2022 ເພື່ອນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອ ພິຈາລະນາຮັບຮອງ
2. ຮັບຮອງເອກະສານລາຍງານການເງິນ ປະຈຳປີ 2022 ທີ່ຜ່ານການກວດສອບ ຈາກບໍລິສັດກວດສອບ ພາຍນອກແລ້ວ ໂດຍແຕ່ງຕັ້ງໃຫ້ ທ່ານນາງ ສຸລິພອນ ສຸວັນໄຊລິບ ເປັນຜູ້ປະສານງານກັບຜູ້ກວດສອບ ພາຍນອກ ຖ້າຫາກບົດລາຍງານການເງິນຂອງບໍລິສັດ ມີການປ່ຽນແປງສ່ວນທີ່ເປັນສາລະສຳຄັນ ແມ່ນ ໃຫ້ ທ່ານນາງ ສຸລິພອນ ສຸວັນໄຊລິບ ເປັນຜູ້ແຈ້ງໃຫ້ສະພາບໍລິຫານຮັບຮອງອີກເທື່ອໜຶ່ງ ແຕ່ຫາກມີ ການປ່ຽນແປງພຽງເລັກໜ້ອຍ ທີ່ບໍ່ເຮັດໃຫ້ບົດລາຍງານທາງການເງິນມີການປ່ຽນແປງໃນສາລະທີ່ ສຳຄັນ ໃຫ້ຖືວ່າບົດລາຍງານທາງການເງິນນຳສະເໜີນີ້ ເປັນບົດລາຍງານທາງການເງິນຂອງບໍລິສັດ ປະຈຳປີ 2022, ເພື່ອນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາຮັບຮອງ ແລະ ເຫັນຄວນໃຫ້ ເປີດເຜີຍງົບການເງິນແບບສະໝັກໃຈ
3. ອະນຸມັດຈັດສັນກຳໄລສຸດທິ ປະຈຳປີ 2022 ເປັນຄັງສຳຮອງຕາມກົດໝາຍ ແລະ ຄັງສຳຮອງອື່ນໆ ທີ່ ກົດໝາຍກຳນົດໄວ້ ແລະ ພິຈາລະນາງົດຈ່າຍເງິນປັນຜົນ
4. ພິຈາລະນາງົດຈ່າຍຜົນຕອບແທນປະຈຳປີ ໃຫ້ແກ່ຜູ້ອຳນວຍການ(ສະມາຊິກສະພາບໍລິຫານ) ຈາກຜົນ ການດຳເນີນງານປະຈຳປີ 2022 ເພື່ອນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາຮັບຮອງ.

5. ອະນຸມັດແຜນການດຳເນີນການ, ເງິນເດືອນພະນັກງານ ແລະ ງົບລົງທຶນຂອງບໍລິສັດ ປະຈຳປີ 2023, ເພື່ອນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາຮັບຮອງ.
6. ອະນຸມັດກຳນົດຄ່າຕອບແທນ, ເບ້ຍປະຊຸມ ແລະ ເງິນເດືອນຜູ້ອຳນວຍການ (ສະມາຊິກສະພາບໍລິຫານ) ຂອງບໍລິສັດ ສຳຫຼັບປີ 2023, ເພື່ອນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາຮັບຮອງ.
7. ອະນຸມັດແຕ່ງຕັ້ງ PricewaterhouseCooper (Lao) Sole Company Limited ເປັນຜູ້ກວດສອບບັນຊີພາຍນອກ ສຳລັບປີ 2023 ແລະ ກຳນົດຄ່າຕອບແທນສຳລັບການກວດສອບ ເພື່ອນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາຮັບຮອງ.
8. ພິຈາລະນາກຳນົດເອົາວັນທີ 17 ມີນາ 2023 ເປັນມື້ປິດປຶ້ມບັນຊີທະບຽນຜູ້ຖືຄອງຮຸ້ນຂອງບໍລິສັດ ເພື່ອກຳນົດສິດຜູ້ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ແລະ ໄດ້ຮັບເງິນປັນຜົນ ປະຈຳປີ 2022 (ຖ້າມີການຈ່າຍ).
9. ພິຈາລະນາເຫັນດີ ຈັດກອງປະຊຸມຜູ້ຖືຮຸ້ນ ໂດຍກຳນົດເອົາວັນທີ 25 ເມສາ 2023 ເວລາ 9.30 ໂມງ ເປັນມື້ຈັດກອງປະຊຸມສາມັນ ຜູ້ຖືຮຸ້ນ ປະຈຳປີ 2022 ແລະ ອະນຸມັດວາລະກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2022 ໂດຍມອບໃຫ້ຜູ້ອຳນວຍການເປັນຜູ້ກະກຽມກອງປະຊຸມດັ່ງກ່າວ ທັ້ງນີ້ຫາກມີຄວາມຈຳເປັນຕ້ອງປ່ຽນແປງເພື່ອຄວາມເໝາະສົມ ມອບສິດໃຫ້ ຜູ້ອຳນວຍການມີສິດປ່ຽນແປງໄດ້.
10. ພິຈາລະນາເຫັນດີໃຫ້ແຕ່ງຕັ້ງ ທ່ານນາງ ພູວັນ ຈັນທະລັງສີ ແລະ ທ່ານນາງ ມະລິ ໄຊຍະວົງ ໃຫ້ເປັນຜູ້ຕ່າງໜ້າຂອງບໍລິສັດ ຊຶ່ງເປັນຜູ້ທີ່ມີຄວາມຮູ້ດ້ານກົດໝາຍ ເພື່ອປະກອບສ່ວນເຂົ້າເປັນຄະນະກຳມະການກວດກາກອງປະຊຸມຜູ້ຖືຮຸ້ນ ແລະ ລົງຄະແນນສຽງ ຕາມລະບຽບ ແລະ ກົດໝາຍທີ່ກຳນົດໄວ້ ສ່ວນການແຕ່ງຕັ້ງຕົວແທນຜູ້ຖືຮຸ້ນລາຍຍ່ອຍນັ້ນ ເຫັນດີມອບອຳນາດໃຫ້ຝ່າຍບໍລິຫານ ແຕ່ງຕັ້ງໂດຍຄັດເລືອກເອົາຈາກຜູ້ຖືຮຸ້ນລາຍຍ່ອຍທີ່ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 ທັ້ງນີ້ຖ້າຫາກມີຄວາມຈຳເປັນຕ້ອງປ່ຽນແປງຜູ້ຕາງໜ້າຂອງບໍລິສັດ ມອບສິດໃຫ້ຜູ້ອຳນວຍການເປັນຜູ້ເລືອກຜູ້ທີ່ມີຄຸນສົມບັດເໝາະສົມແທນໄດ້

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງທ່ານເພື່ອຮັບຊາບ ແລະ ເອກະສານສະບັບນີ້ໃຊ້ຕາງລາຍງານ

ສະມາຊິກສະພາບໍລິຫານ/ຜູ້ອຳນວຍການ

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ MAHATHUEN LEASING PUBLIC COMPANY

ທ້າວ ມານິບ ຕຣີສົກວິໄລ